สาธารณะรัด

ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ

ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນາຖາວອນ

ກະຊວງສຶກສາທິການ ແລະ ກິລາ

ເລກທີ 1149 /ສສກ

ນະຄອນຫຼວງວຽງຈັນ, ວັນທີ 12 ກັນຍາ 2018

ກະຊວງໂຍທາທິການ ແລະ ຂົນສົ່ງ
ເຂົ້າ ເລກທີ: 22093
ວັນທີ: 27 ກັນຍາ 2018

# ແຈ້ງການ

**ຮຽນ:** ບັນດາທ່ານການນຳກະຊວງ, ອົງການທຽບເທົ່າ, ການນຳຂອງທ້ອງຖິ່ນ, ອົງການຈັດຕັ້ງສັງຄົມທັງພາກລັດ ແລະ ເອກະຊົນ, ພະນັກງານ, ທະຫານ, ຕຳຫຼວດ ແລະ ປະຊາຊົນລາວບັນດາເຜົ່າໃນຂອບເຂດທົ່ວປະເທດ.

**ເລື່ອງ:** ການເລື່ອນເວລາການຈັດງານມະຫາກຳກິລາລະດັບຊາດຢູ່ພາຍໃນປະເທດ.

- ອີງຕາມ ແຈ້ງການຂອງຫ້ອງວ່າການສຳນັກງານນາຍົກລັດຖະມົນຕີ ສະບັບເລກທີ 1525/ຫສນຍ.ກລຂ, ລົງວັນທີ 14 / 9 / 2018 ເລື່ອງການເລື່ອນການຈັດງານມະຫາກຳແຂ່ງຂັນກິລາລະດັບຊາດຢູ່ພາຍໃນປະເທດ.
- ອີງຕາມ ທິດຊີ້ນຳ ຂອງພະນະທ່ານນາຍົກລັດຖະມົນຕີ ແຫ່ງ ສປປ ລາວ.

ກະຊວງສຶກສາທິການ ແລະ ກິລາ ຂໍຖືເປັນກຽດແຈ້ງໃຫ້ຊາບວ່າ:

1. ງານມະຫາກຳກິລາແຫ່ງຊາດຄັ້ງທີ XI ທີ່ຈະຈັດຢູ່ແຂວງຊຽງຂວາງໃນວັນທີ 11 ພະຈິກ 2018 ຈະໄດ້ເລື່ອນໄປຈັດໃນວັນທີ 11 ພະຈິກ 2019;
2. ງານມະຫາກຳກິລາມະຫາວິທະຍາໄລລາວ ຄັ້ງທີ II, ງານມະຫາກຳກິລານັກຮຽນມັດທະຍົມທົ່ວປະເທດຄັ້ງທີ VII ແລະ ງານມະຫາກຳກິລາແຫ່ງຊາດຄັ້ງທີ XII ຈະໄດ້ມີການຄົ້ນຄວ້າພິຈາລະນາຄືນໃໝ່ ໂດຍມີການປະສານສົມທົບກັບທຸກພາກສ່ວນທີ່ກ່ຽວຂ້ອງເມື່ອມີຄວາມພ້ອມແລ້ວ ຈຶ່ງຈະສະເໜີຂໍອະນຸມັດຈາກລັດຖະບານເປັນແຕ່ລະກໍລະນີໄປ;
3. ສະເພາະຂະແໜງການສຶກສາທິການ ແລະ ກິລາ, ມອບໃຫ້ຜູ້ບໍລິຫານການສຶກສາ ແລະ ກິລາ ສຶກສາອົບຮົມແນວຄິດຕໍ່ຄູອາຈານ, ນັກຮຽນ-ນັກສຶກສາ ແລະ ນັກກິລາ ສືບຕໍ່ກະກຽມຄວາມພ້ອມເຂົ້າຮ່ວມຈັດການແຂ່ງຂັນງານມະຫາກຳກິລາແຫ່ງຊາດຄັ້ງທີ XI ໃນປີ 2019, ທີ່ແຂວງຊຽງຂວາງໃຫ້ມີຜົນສຳເລັດຢ່າງຈົບງາມ.

**ລັດຖະມົນຕີ**

ກະຊວງສຶກສາທິການ ແລະ ກິລາ

ລັດຖະມົນຕີ

ນ.ແສງເດືອນ ຫຼ້າຈັນທະບູນ